ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 232 /ນຍ

ນະຄອນຫລວງວຽງຈັນ, ວັນທີ 30.04.2010

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການພັດທະນາສະຫວັດດີການສັງຄົມ ໄລຍະແຕ່ ປີ 2011 ຫາ 2020

- ອີງຕາມ ມາດຕາ 12 ຂອງກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ມີນາ 2010, ຄັ້ງວັນທີ 29-31 ມີນາ 2010.
- ອີງຕາມ ໜັງສືສະເໜີຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 921/ຮສສ, ລົງວັນທີ 20 ເມສາ 2010.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :**

**ມາດຕາ 1 :** ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການພັດທະນາສະຫວັດດີການສັງຄົມ ໄລຍະແຕ່ ປີ 2011 ຫາ 2020.

**ມາດຕາ 2 :** ມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວໃຫ້ປະກົດຜົນເປັນຈິງ.

**ມາດຕາ 3 :** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫລວງ, ແຂວງ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4 :** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ